ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໙໕/ປພຖຂ/໐໕໑໔໑໐**

# ຖແລງການ

# ປະນາມອະນຸສອນຮູບປັ້ນ ໂຫ້ຈິມິນ ຢູ່ລາວ

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ ໄດ້ອອກຖແລງການ ສບັບນີ້, ເພື່ອປະນາມ ການສ້າງຮູບປັ້ນຂອງ ໂຫ້ຈິມິນ ຂຶ້ນ ຢູ່ໃນພື້ນແຜ່ນດິນລາວ ຢ່າງເດັ່ງຊຶມທີ່ສຸດ!.

ພິທີວາງສີລາເຣິກ, ທີ່ທ່ານບຸນຍັງ ວໍຣະຈິດ ກັມການກົມການເມືອງສູນກາງພັກປະຊາຊົນ ປະຕິວັດລາວ ຮອງປະທານປະເທດ ແລະທ່ານ ໂທ ດຶກ ທວາງ ກັມການກົມການເມືອງ ສູນກາງພັກ ຄອມມິວນິສ ວຽດນາມຮ່ວມກັນ ເປັນສັກຂີພິຍານ ການກໍ່ສ້າງ ຢູ່ບ້ານຊຽງຫວາງ ເມືອງ ໜອງບົກ ແຂວງ ຄຳມ່ວນ ໃນວັນທີ **19** ພຶສພາ **2010** ນັ້ນ, ມັນເປັນການທ້າທາຍ ຕໍ່ອຳນາດ ອະທິປະໄຕ ຂອງຊາດລາວ ຄົນລາວ ຢ່າງຮ້າຍແຮງທີ່ສຸດ! ເພາະ ໂຫ້ຈິມິນ ບໍ່ແມ່ນ ວິຣະບຸຣຸສ ຂອງລາວ.

ຫລາຍຄົນ ໃນທົ່ວໂລກ ຮູ້ຈັກກັນດີ ວ່າ "ທ່ານ ໂຫ້ ຈິມິນ ເປັນຜູ້ນຳຍິ່ງໃຫຍ່ ຂອງວຽດນາມ" ສັ້ນ, ກໍຄວນສ້າງ ໃຫ້ປະຊາຊົນວຽດນາມ ໄດ້ຂາບໄຫວ້ກັນ ຢູ່ໃນພື້ນແຜ່ນດິນ ຂອງ ວຽດນາມພຸ້ນ!. -ອະນຸສອນຮູບປັ້ນ ໂຫ້ຈິມິນ ຢູ່ໃນພື້ນແຜ່ນດິນລາວ, ຈະແມ່ນຢູ່ແຂວງຄຳມ່ວນ, ຢູ່ແຂວງ ວຽງຈັນ ແລະສວັນະເຂດ ກໍລ້ວນແລ້ວ ແຕ່ເປັນພັຍອັນຕຣາຍ ຕໍ່ຊາດຕໍ່ປະຊາຊົນລາວ ຢ່າງໃຫຍ່ຫລວງທີ່ສຸດ!. ເພາະມັນແມ່ນ ບໍ່ເກີດຂອງຄວາມຂັດແຍ້ງ. ມັນແມ່ນເຊື້ອໂຣກ໌ມະເລັງ ທີ່ຮ້າຍແຮງທີ່ສຸດ ແລະມັນ ແມ່ນຣະເບີດເວລາທີ່ຫ້າງໄວ້; ຫວັງຈະທຳລາຍຄວາມເປັນຊາດ ເອກຣາດ ຂອງລາວ ໃຫ້ໝົດໄປໄດ້ ຢ່າງສິ້ນເຊີງໃນອະນາຄົດ... ແຕ່ການສ້າງ ອະນຸສອນ ຮູບປັ້ນໂຫ້ຈິມິນ ໄວ້ໃນພື້ນແຜ່ນດິນລາວ ໃນສັຕວັດ ທີ **21** ນີ້, ແນ່ນອນວ່າ "ບໍ່ໄດ້ຜົນ" ເພາະມັນບໍ່ແມ່ນ ຍຸກສມັຍລ້າທາດ ລ້າເມືອງຂຶ້ນແບບເກົ່າ.

ສັ້ນ, ຮູບປັ້ນ ໂຫ໌ຈິມິນ, ເຫນທີ່ ຈະເປັນເຄື່ອງໝາຍສລຸບຜົນງານຄອບຄອງລາວ ຕາມແຜນ ຍຸທສາດ ສັນຍາມິຕພາບລາວ-ວຽດນັ້ນ ມັນຊ້ຳພັດກາຍເປັນ ການຝັງຫລັກຄຽດແຄ້ນ, ກາຍເປັນຕົວແທນ ຂອງນັກລ້າເມືອງຂຶ້ນ, ຊຶ່ງບໍ່ແຕກຕ່າງຫຍັງ ກັບຮູບປັ້ນ ຂອງ ທ່ານ **August Pavie** ຢູ່ວຽງຈັນ, ທີ່ປະຊາຊົນລາວ ໄດ້ເອົາໄປຖິ້ມລົງນ້ຳຂອງ.... ແຕ່ທາງສະຖານທູດ ຝຣັ່ງ ຂໍເອົາໄປໄວ້ ໃນບໍຣິເວນ ສະຖານທູດ ຂອງພວກເຂົາ, ເພື່ອໄວ້ໃຫ້ຄົນລາວ ໄດ້ສຳນຶກ ເຖິງການສູນເສັຽເອກຣາຊ ພາຍໃຕ້ ການປົກຄອງ ຂອງກະສັຕລາວສມັຍນັ້ນ.

ອັນນີ້, ກໍເຊັ່ນດຽວ!...ຄນະພັກຣັດ ສປປລາວ. ນອກຈາກຈະເປັນຜູ້ທຳລາຍກຽດສັກສີ ຂອງປະທານ ໂຫ໌ຈິມິນ ແລ້ວ, ພວກທ່ານກໍຈະຖືກປະຊາຊົນລາວກ່າວປະນາມ ໄປຮອດຊົ່ວລູກຊົ່ວຫລານ ວ່າເປັນຜູ້ ທໍຣະຍົດ ຕໍ່ອ້າຍເອື້ອຍນ້ອງໃນຖັນແຖວນັກປະຕິວັດດ້ວຍກັນ, "ຂາຍຊາດ ຂາຍປະຊາຊົນ".

ພັກຣັດ ທີ່ອວດໂຕ ເປັນຜູ້ສລາດສ່ອງໃສນັ້ນ, ຄົງເຂົ້າໃຈດີວ່າ "ນ້ຳໃຈຮັກຊາດ ແລະສາກົນ ກັມະຊົພ ທີ່ແທ້ຈິງນັ້ນ, ຕ້ອງຢືນຢູ່ ບົນພື້ນຖານ ຂອງຄວາມສເມີພາບກັນ; ຕ່າງຝ່າຍ ກໍຕ່າງໄດ້ຮັບ ຜົນປໂຍດ... ແຕ່ກຸ່ມ ເລຍວນ-ພາມວັນຫດົ້ງ ໄດ້ໃຫ້ທ່ານ ໄກສອນ ພົມວິຫານ ເຊັນສົນທິສັນຍາ ມິຕພາບແລະການຮ່ວມມືລາວ-ວຽດ ແລະສັນຍາແຕ່ງໆ ທີ່ກຳນົດຊາຍແດນ ລາວ-ວຽດ ໃນວັນທີ 17 ກໍຣະກະດາ **1977** ນັ້ນ, ລ້ວນແລ້ວແຕ່ ແມ່ນສັນຍາ ຣະຫວ່າງ "ແຫລ້ງ ກັບນາຍ" ບໍ່ມີຄວາມສເມີພາບກັນ ແມ່ນແຕ່ນ້ອຍດຽວ!. ມັນໄດ້ສ້າງເງື່ອນໄຂຜູກມັດ ໃຫ້ພັກຣັດ ຕ້ອງຂຶ້ນກັບ ວຽດນາມ ຢ່າງສິ້ນເຊີງ.

ເຖິງຄາວແລ້ວ, ທີ່ພັກຣັດ ສປປລາວ. ຕ້ອງຕັດສິນໃຈ ດ້ວຍຄວາມກ້າຫານ, ອອກມາ ໂອ້ລົມກັບພວກເຮົາ ປະຊາຊົນພັກ ແລະ ກຳລັງທັບເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວທັງຊາດ, ເພື່ອພ້ອມກັນກອບກູ້ ເອົາອິສຣະພາບຄືນມາ. ປະເທດຊາດ ຕ້ອງມີຄວາມເປັນເອກຣາດ ປະຊາທິປະໄຕ ແລະປະຊາຊົນຕ້ອງມີຄວາມເປັນເອກພາບກັນ, ໃຫ້ເປັນໄປຕາມຈິດໃຈ ການຕໍ່ສູ້ ຂອງ ຂບວນການ ລາວອິສຣະໃນອະດີດ ເພື່ອ ລາວລວມລາວໃຫ້ເປັນອັນນຶ່ງອັນດຽວ, ແລະພ້ອມກັນສ້າງສາ ພັທນາປະເທດ ໃຫ້ມີຄວາມຈເຣີນ ສີວິໄລກ້າວໜ້າທັນສມັຍ ແລະ ມີສັນຕິສຸຂ ໄປຕລອດກາລະນານ.

ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.
ຂໍຂອບໃຈ

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງປະທານພັກ**
**ອາຈານ ສົມນຶກ ຟອງສູ ວັນ**
**ວັນທີ ໑໔ ມິຖຸນາ ໒໐໑໐.**